ສຳນັກງານໃຫຍ່

ເລກທີ: 2465 /ທຄຕລ 2026
ນະຄອນຫຼວງວຽງຈັນ, ວັນທີ: 15 JUL 2026

# ໜັງສືແຈ້ງເຊີນປະມູນ

**ເຖິງ :** ບັນດາບໍລິສັດອອກແບບກໍ່ສ້າງ ແລະ ຕົບແຕ່ງ

**ເລື່ອງ:** ແຈ້ງເຊີນເຂົ້າຮ່ວມຍື່ນຊອງປະມູນລາຄາອອກແບບຕຶກອາຄານຂອງ ທຄຕລ (ຂະຫຍາຍໄລຍະເວລາ).

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ (ທຄຕລ) ຂໍຖືເປັນກຽດແຈ້ງເຊີນມາຍັງບັນດາບໍລິສັດອອກແບບກໍ່ສ້າງ ແລະ ຕົບແຕ່ງ ກ່ຽວກັບການສະເໜີເງື່ອນໄຂ ແລະ ຂັ້ນຕອນໃນການປະກອບເອກະສານຍື່ນຊອງປະມູນລາຄາອອກແບບຕຶກອາຄານຂອງ ທຄຕລ ໂດຍມີເນື້ອໃນດັ່ງນີ້:

## I. ເງື່ອນໄຂການປະກອບເອກະສານການປະມູນດັ່ງນີ້:

### 1. ຊອງທີ 01 (ບໍ່ປິດຊອງ):

1) ໃບທະບຽນວິສາຫະກິດ;
2) ໃບອະນຸຍາດດຳເນີນທຸລະກິດປີ 2025 ຫຼື 2026;
3) ທຶນຈົດທະບຽນວິສາຫະກິດ 1 ຕື້ກີບຂຶ້ນໄປ;
4) ໃບຢັ້ງຢືນການເສຍອາກອນປີ 2024 ຫຼື 2025;
5) ໃບຢັ້ງຢືນຜົນງານ ແລະ ປະສົບການທາງດ້ານການອອກແບບກໍ່ສ້າງ ແລະ ຕົບແຕ່ງອາຄານທະນາຄານ ຫຼື ອາຄານສຳນັກງານຫ້ອງການ 3 ຊັ້ນ ຢ່າງໜ້ອຍ 3 ໂຄງການ.
   - ເອກະສານຊອງທີ 01 ແມ່ນໃຫ້ສົ່ງກ່ອນວັນທີ 27/07/2026 ເວລາ 08:30-15:30 ໂມງ ທີ່ພະແນກຫ້ອງການບໍລິຫານ ແລະ ການເງິນ ຊັ້ນ 04 ຕຶກ C ສຳນັກງານໃຫຍ່.

### 2. ຊອງທີ 02 (ປິດຊອງ):

1) ໃບສະເໜີລາຄາ 2 ຊຸດ:
   1.1 ໃບສະເໜີລາຄາ 1 ຊຸດ ໂດຍສະເໜີເປັນເປີເຊັນ (%) ຂອງມູນຄ່າລາຄາກາງ ຫຼື ລາຄາຮັບເໝົາ ຂອງວຽກທີ່ອອກແບບໃໝ່ທັງໝົດ ໂດຍເອົາມູນຄ່າຕໍ່າກວ່າມາຄິດໄລ່ເປັນຄ່າອອກແບບ ລວມອາກອນມູນຄ່າເພີ່ມ;
   1.2 ໃບສະເໜີລາຄາ 1 ຊຸດ ໂດຍສະເໜີເປັນເປີເຊັນ (%) ຂອງມູນຄ່າລາຄາກາງ ຫຼື ລາຄາຮັບເໝົາ ໂດຍສະເໜີລາຄາທີ່ນຳໃຊ້ແບບອາຄານເດີມ ຫຼື ແບບທີ່ເຄີຍອອກແບບມາແລ້ວ ແຕ່ອອກແບບເພີ່ມບາງລາຍການເຊັ່ນ: ຮາກຖານ, ຮົ້ວ-ກຳແພງ, ເດີ່ນ, ເຮືອນພັກ, ຫ້ອງນໍ້າ ຮ່ອງລະບາຍນໍ້າ, ວຽກອື່ນໆທີ່ໄດ້ເກີດຂຶ້ນຕົວຈິງ ແລະ ຈັດສັນພື້ນທີ່ໃຊ້ສອຍພາຍໃນຕອນດິນ ໂດຍເອົາມູນຄ່າຕໍ່າກວ່າມາຄິດໄລ່ເປັນຄ່າອອກແບບ ລວມອາກອນມູນຄ່າເພີ່ມ;
2) ໜັງສືຄໍ້າປະກັນການປະມູນ: ຜູ້ຮັບເໝົາຕ້ອງວາງເງິນຄໍ້າປະກັນການປະມູນຕໍ່າສຸດ 20,000,000 ກີບ ດ້ວຍໜັງສືຄໍ້າປະກັນທີ່ອອກໂດຍທະນາຄານພາຍໃນ (ວັນໝົດອາຍຸໜັງສືຄໍ້າປະກັນຕ້ອງເຖິງວັນທີ 18/10/2026) ຫຼື ແຊັກທີ່ວິຊາແລ້ວ/ແຊັກເງິນສົດ (ທຄຕລ ບໍ່ຮັບເງິນສົດ), ພາຍຫຼັງປະກາດຜົນປະມູນ



ເລກທີ 01, ຖະໜົນ: ປາງຄຳ, ເມືອງ ຈັນທະບູລີ, ນະຄອນຫຼວງວຽງຈັນ, ສປປ ລາວ. ຕູ້ ປ.ນ: 2925, ໂທລະສັບ: (856-21) 213200-3, 223243-4, 255080-5
ແຟັກ: (856-21) 213202, 223012, 223245, Website: http:/www.bcel.com.la, E-mail: bcelhqv@bcel.com.la, SWIFT Code: COEBLALA

ທຄຕລ ຈະສົ່ງໜັງສືຄ້ຳປະກັນ ຫຼື ແຊັກດັ່ງກ່າວຄືນ, ສຳລັບຜູ້ຊະນະການປະມູນແມ່ນຈະສົ່ງຄືນພາຍຫຼັງເຊັນສັນຍາ.

- ວັນອັງຄານ, ວັນທີ 18/08/2026, ເວລາ 14:00 ໂມງ ແມ່ນມື້ເປີດຊອງປະມູນຊ່ອງໜ້າຄະນະກຳມະການ ທຄຕລ, ບໍລິສັດຕ້ອງຍື່ນຊອງດ້ວຍຕົນເອງ ຫຼື ສົ່ງຜູ້ຕາງໜ້າເຂົ້າຮ່ວມເປີດຊອງປະມູນທີ່ຫ້ອງປະຊຸມຊັ້ນ 05 ຕຶກ C;
- ລາຄາທີ່ສະເໜີມາຕ້ອງເປັນລາຄາທີ່ສາມາດເປັນຜູ້ອອກແບບເອງ ແລະ ບໍ່ໃຫ້ເປັນການປະມູນໃນນາມ ນາຍໜ້າ ຫຼື ຂາຍຕໍ່ໃຫ້ບໍລິສັດອື່ນ;

## II. ເງື່ອນໄຂດ້ານການອອກແບບ

1) ໄລຍະເວລາການອອກແບບ: ທຄຕລ ຈະເຊັນສັນຍາກັບຜູ້ຊະນະປະມູນເທື່ອລະ 02ປີ ຕະຫຼອດ ໄລຍະເວລາຕາມສັນຍາລາຄາຈະບໍ່ມີການປ່ຽນແປງ;
2) ໜ້າວຽກທີ່ຕ້ອງອອກແບບ ແລະ ຄິດໄລ່: ແບບ 3D ພາຍນອກ ແລະ ຕົບແຕ່ງພາຍໃນ ແລະ ແບບ 2D ທີ່ໃຊ້ກໍ່ສ້າງເຊິ່ງປະກອບມີ: ວຽກບຸກເບີກ, ຖົມດິນ, ຕີຜັງ, ຮາກຖານ, ເສົາ, ຄານ, ພື້ນ, ຝາ, ເພ ດານ, ຫຼັງຄາ, ວຽກສຸຂະພິບານ, ລະບົບໄຟຟ້າ, ລະບົບກັນຟ້າຜ່າ, ລະບົບປ້ອງກັນໄຟ ກະຊາກ, ລະບົບດັບເພີງ, ລະບົບແອເຢັນ, ລະບົບລະບາຍອາກາດ, ເຟີນີເຈີຕິດຕັ້ງ, ເຟີນີເຈີລອຍ, ວຽກ ເດີ່ນໃນຮົ້ວ ແລະ ນອກຮົ້ວ, ວຽກກຳແພງ, ວຽກປະຕູຮົ້ວ, ວຽກຮ່ອງລະບາຍນ້ຳ, ວຽກທາສີ, ວຽກກັນຂະໂມຍ, ວຽກປ້າຍ, ວຽກລະບົບ network, Alarm, ກ້ອງວົງຈອນປິດ, Access control, ວຽກແລ່ນສາຍໂທລະສັບ ແລະ ວຽກອື່ນໆທີ່ກ່ຽວຂ້ອງ.
3) ອອກແບບກໍ່ສ້າງ ແລະ ຕົບແຕ່ງ + ຄິດໄລ່ BOQ ແລະ ລາຄາກາງ: ສາຂາ, ໜ່ວຍບໍລິການ, ຫ້ອງແລກປ່ຽນ ແລະ ຫ້ອງບໍລິການຕ່າງໆ;
4) ອອກແບບສ້ອມແປງ ແລະ ຕົບແຕ່ງ + ຄິດໄລ່ BOQ ແລະ ລາຄາກາງ: ໜ່ວຍບໍລິການ, ຫ້ອງແລກປ່ຽນ ແລະ ຫ້ອງບໍລິການຕ່າງໆ;
5) ສຳຫຼວດສະຖານທີ່ໃນການສ້ອມແປງ + ຄິດໄລ່ BOQ: ສຳນັກງານໃຫຍ່, ສາຂາ, ໜ່ວຍບໍລິການ, ຫ້ອງແລກປ່ຽນ ແລະ ຫ້ອງບໍລິການຕ່າງໆ;

## III. ການພົວພັນ ແລະ ໄລຍະເວລາການປະຕິບັດວຽກ

1) ສາມາດສອບຖາມລາຍລະອຽດເພີ່ມເຕີມກ່ຽວກັບລາຍລະອຽດການອອກແບບ ຈາກວັນທີ 15/07/2026-07/08/2026, ໃນຊ່ວງເວລາ 08:30-11:30 ໂມງ ແລະ 13:30-16:00 ໂມງ ທີ່ໝາຍເລກໂທລະສັບ 021 213200-414 ນອກຈາກເວລາດັ່ງກ່າວແລ້ວ ທຄຕລ ຈະຂໍສະຫງວນສິດໃນການຕອບຄຳຖາມໃດໆ ທັງໝົດ.

## IV. ເງື່ອນໄຂຂອງສັນຍາລະຫວ່າງ ທຄຕລ ແລະ ຜູ້ໃຫ້ບໍລິການທີ່ຊະນະການປະມູນ:

1) ຖ້າຜູ້ຊະນະການປະມູນປະຕິເສດການເຊັນສັນຍາ ທຄຕລ ຈະບໍ່ສົ່ງເງິນຄ້ຳປະກັນການປະມູນຄືນ.
2) ຜູ້ທີ່ຊະນະການປະມູນຈະໄດ້ເຊັນສັນຍາກັບ ທຄຕລ, ຄ່າທຳນຽມຈົດທະບຽນສານຂອງສັນຍາແມ່ນມອບໃຫ້ເປັນຄວາມຮັບຜິດຊອບຂອງບໍລິສັດອອກແບບທີ່ຊະນະການປະມູນ.
3) ຊຳລະຄ່າອອກແບບ 100% ພາຍຫຼັງ ທຄຕລ ໄດ້ຜູ້ຮັບເໝົາໃນແຕ່ລະໂຄງການ.
4) ໃນການປະຕິບັດສັນຍາໃນໄລຍະ 02ປີ ເຊິ່ງ ທຄຕລ ອາດຈະມີໂຄງການທີ່ມີລັກສະນະສະເພາະ ຫຼື ມີວັດຖຸປະສົງອັນສະເພາະຂອງ ທຄຕລ ເອງ ແມ່ນ ທຄຕລ ສາມາດມີການແຈ້ງເຊີນປະມູນບໍລິສັດອອກແບບຕ່າງຫາກ ເພື່ອໃຫ້ໄດ້ຕາມວັດຖຸປະສົງຂອງ ທຄຕລ;

5) ການປະຕິບັດສັນຍາໃນໄລຍະ 02ປີ ທຄຕລ ຈະມີການປະເມີນການປະຕິບັດວຽກຂອງຜູ້ໃຫ້ບໍລິການ ກໍລະນີການປະຕິບັດວຽກມີປະສິດທິພາບ ຫຼື ບໍ່ມີປະສິດທິພາບ ທຄຕລ ສາມາດພິຈາລະນາຕໍ່ສັນຍາ ຫຼື ຍົກເລີກສັນຍາບໍລິການໄດ້.

ດັ່ງນັ້ນ, ຈຶ່ງແຈ້ງເຊີນມາຍັງບັນດາບໍລິສັດເພື່ອຢື່ນຊອງປະມູນຕາມທີ່ກ່າວມາຂ້າງເທິງນັ້ນດ້ວຍ.

**ຜູ້ອຳນວຍການ**

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ
BANQUE POUR LE COMMERCE EXTERIEUR LAO PUBLIC

ນ.ສາຍສະໝອນ ຈັນທະຈັກ

ຜູ້ປະສານງານ:

1) ທ່ານ ນາງ ວຽງແກ້ວ ອິນສີມີໄຊ 020 59 594 236
2) ທ່ານ ເພັດສະໝອນ ແສງຕະກຸນ 020 77467722